**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ: 11 /ນຍ
ນະຄອນຫຼວງວຽງຈັນ, ວັນທີ: 24 / 02 / 26

# ຂໍ້ຕົກລົງ
# ວ່າດ້ວຍ ການແຕ່ງຕັ້ງຄະນະສະເພາະກິດ ລະດັບຊາດ ເພື່ອສະກັດກັ້ນ, ຕ້ານ ແລະ ປາບປາມ ອາຊະຍາກຳສັດປ່າຂ້າມຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ແຈ້ງການຈາກກອງເລຂາໄຊເຕັດ ສະບັບເລກທີ SF/LA/02, ລົງວັນທີ 15 ທັນວາ 2025;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 0251/ກສ, ລົງວັນທີ 23 ມັງກອນ 2026.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງ ຄະນະຊີ້ນຳລວມ ແລະ ຄະນະປະຕິບັດຕົວຈິງ ຂັ້ນສູນກາງ ເພື່ອສະກັດກັ້ນ, ຕ້ານ ແລະ ປາບປາມ ອາຊະຍາກຳສັດປ່າຂ້າມຊາດ ດັ່ງມີລາຍຊື່ລຸ່ມນີ້:

***ກ. ຄະນະຊີ້ນຳລວມ ປະກອບມີບັນດາທ່ານ ດັ່ງນີ້:***

1. ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ແລະ ການພົວພັນຮ່ວມມືກັບຕ່າງປະເທດ — ເປັນຫົວໜ້າຄະນະ;
2. ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຮອງຫົວໜ້າຄະນະ, — ເປັນຜູ້ປະຈຳການ;
3. ທ່ານ ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ — ເປັນຄະນະ;
4. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ — ເປັນຄະນະ;
5. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ — ເປັນຄະນະ;
6. ທ່ານ ຮອງປະທານ ອົງການກວດກາແຫ່ງລັດ — ເປັນຄະນະ;
7. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ — ເປັນຄະນະ;
8. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ — ເປັນຄະນະ;
9. ທ່ານ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ — ເປັນຄະນະ;
10. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ — ເປັນຄະນະ;
11. ທ່ານ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — ເປັນຄະນະ;
12. ທ່ານ ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ — ເປັນຄະນະ.

- **ສິດ ແລະ ໜ້າທີ່ ຄະນະຊີ້ນຳລວມ ມີດັ່ງນີ້:**

1) ປຶກສາຫາລື ແລະ ແບ່ງຄວາມຮັບຜິດຊອບພາຍໃນຄະນະຊີ້ນຳລວມ ເພື່ອໃຫ້ແຕ່ລະທ່ານລົງເລິກຊີ້ນຳ, ຮັບຜິດຊອບຕາມພາລະບົດບາດ, ພ້ອມທັງແຕ່ງຕັ້ງຄະນະກອງເລຂາຂອງຂະແໜງການທີ່ຕົນສັງກັດຢູ່ ໃນການສະກັດກັ້ນ, ຕ້ານ ແລະ ປາບປາມ ອາຊະຍາກຳສັດປ່າຂ້າມຊາດ ໃຫ້ມີຜົນສຳເລັດຕົວຈິງ ໂດຍຖືເປັນວຽກງານບູລິມະສິດເລັ່ງດ່ວນ ຂອງລັດຖະບານ;
2) ກຳນົດທິດທາງ, ມາດຕະການ ແລະ ວິທີການແກ້ໄຂເລັ່ງດ່ວນ ບົນພື້ນຖານກົດໝາຍ, ລະບຽບການ ແລະ ນິຕິກຳທີ່ກ່ຽວຂ້ອງ ຕໍ່ບັນຫາການລັກລອບຄ້າຂາຍສັດປ່າທີ່ຜິດກົດໝາຍ ເປັນຕົ້ນແມ່ນ ງາຊ້າງ, ນໍແຮດ ແລະ ເສືອ ຢູ່ຂອບເຂດນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ ແລະ ບັນດາແຂວງອື່ນໆ ເພື່ອ

ປາບປາມເຄືອຂ່າຍອາຊະຍາກຳທີ່ມີການຈັດຕັ້ງຂ້າມຊາດ ໃຫ້ສຳເລັດຂາດຕົວ ພາຍໃນກອບເວລາທີ່ກຳນົດ;

3) ຊີ້ນຳຄະນະປະຕິບັດຕົວຈິງ ຮີບຮ້ອນສະຫຼຸບຜົນການດຳເນີນຄະດີອາຊະຍາກຳສັດປ່າ 05 ຄະດີ ທີ່ຍັງຄ້າງໃຫ້ເປັນບູລິມະສິດ ລວມທັງຄະດີໃໝ່ ເປັນຕົ້ນແມ່ນ ຄະດີເສືອໂຄ່ງ ຢູ່ແຂວງຈຳປາສັກ ແລະ ຄະດີງາຊ້າງ, ນໍແຮດ ຢູ່ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ ແລະ ແຂວງອື່ນໆ ໃຫ້ໄດ້ຮັບການຕັດສິນລົງໂທດຢ່າງເດັດຂາດ ແລະ ສົມສ່ວນ ຕາມປະມວນກົດໝາຍອາຍາ ແລະ ລະບຽບການຂອງສົນທິສັນຍາສາກົນ ແລ້ວລາຍງານຜົນການຈັດຕັ້ງປະຕິບັດໃຫ້ກອງເລຂາໄຊເຕັດຊາບ ຕາມເວລາທີ່ກຳນົດໄວ້;

4) ຊີ້ນຳຄະນະປະຕິບັດຕົວຈິງ ຜັນຂະຫຍາຍແຜນດຳເນີນງານ (Compliance Action Plan - CAP) ເປັນແຜນວຽກລະອຽດ ໂດຍສະເພາະວຽກງານບັງຄັບໃຊ້ກົດໝາຍ, ການກວດກາ, ສະກັດກັ້ນ, ຕ້ານ ແລະ ປາບປາມ ອາຊະຍາກຳສັດປ່າຂ້າມຊາດ ເພື່ອຮັບປະກັນການບັນລຸຕົວຊີ້ວັດທັງໝົດ ກ່ອນເດືອນສິງຫາ 2026 ຫຼື ລ່ວງໜ້າ 90 ວັນ ກ່ອນກອງປະຊຸມຄະນະປະຈຳໄຊເຕັດ ຄັ້ງທີ 81 (SC81);

5) ປະສານງານ ແລະ ແນະນຳອົງການປົກຄອງທ້ອງຖິ່ນ ໃຫ້ຮ່ວມມືກັບຄະນະປະຕິບັດງານຕົວຈິງຕາມສາຍຕັ້ງ ໃນການລົງກວດກາ, ສະກັດກັ້ນ ແລະ ປາບປາມຈຸດຄ້າຂາຍສັດປ່າຜິດກົດໝາຍ ຕາມທິດຊີ້ນຳເລັ່ງດ່ວນຂອງລັດຖະບານ ໃຫ້ມີຜົນສຳເລັດຕົວຈິງກ່ອນເດືອນ ສິງຫາ 2026;

6) ຊີ້ນຳຄະນະປະຕິບັດຕົວຈິງ ຄົ້ນຄວ້າການຫັນປ່ຽນຟາມເສືອ ໃຫ້ກາຍເປັນສວນສັດ ຫຼື ປິດຟາມເສືອທີ່ບໍ່ສອດຄ່ອງກັບລະບຽບການ, ພ້ອມທັງ ແຈ້ງໃຫ້ບັນດາຟາມເສືອ ແລະ ສວນສັດ ຢຸດຕິການຂະຫຍາຍພັນເສືອ ແລະ ຢຸດຕິການຄ້າຂາຍຊິ້ນສ່ວນຜະລິດຕະພັນເສືອຢ່າງເດັດຂາດ ແລ້ວລາຍງານຜົນສຳເລັດຢ່າງເປັນຮູບປະທຳໃຫ້ກອງເລຂາໄຊເຕັດ ຕາມກອບເວລາທີ່ກຳນົດໄວ້;

7) ມີສິດເຊີນການນຳກະຊວງ-ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ມາປຶກສາຫາລື, ຄົ້ນຄວ້າ ແລະ ວາງແຜນການປາບປາມເຄືອຂ່າຍອາຊະຍາກຳສັດປ່າ ໃນແຕ່ລະເປົ້າໝາຍຈຸດສຸມ ໂດຍຖືເປັນວາລະເລັ່ງດ່ວນທີ່ຕ້ອງໄດ້ຮັບການແກ້ໄຂໃຫ້ສຳເລັດຕາມຄຳແນະນຳຂອງໄຊເຕັດ;

8) ມີສິດປັບປຸງ ຫຼື ແຕ່ງຕັ້ງຄະນະປະຕິບັດງານຕົວຈິງ ເພື່ອລົງແກ້ໄຂບັນຫາສະເພາະໜ້າ ໃຫ້ທັນກັບກຳນົດເວລາການລາຍງານຜົນການຈັດຕັ້ງປະຕິບັດຕໍ່ສາກົນ ຢ່າງມີປະສິດທິຜົນ;

9) ຈັດກອງປະຊຸມຄະນະຊີ້ນຳລວມ ທຸກໆ 3 ເດືອນ ຫຼື ຈັດປະຊຸມແບບກະທັນຫັນຕາມຄວາມຈຳເປັນ ເພື່ອຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຂອງຄະນະປະຕິບັດຕົວຈິງ ແລະ ພິຈາລະນາປົດລາຍງານ ກ່ອນສົ່ງໃຫ້ກອງເລຂາໄຊເຕັດຮັບຊາບ;

10) ຊີ້ນຳຄະນະປະຕິບັດຕົວຈິງ ຈັດຕັ້ງປະຕິບັດທຸກໜ້າວຽກທີ່ກ່າວມາຂ້າງເທິງນັ້ນ ແລະ ທຸກຄຳແນະນຳທີ່ກຳນົດໄວ້ໃນແຜນດຳເນີນງານ (CAP) ໃຫ້ສຳເລັດເປັນຮູບປະທຳ ແລ້ວລາຍງານໃຫ້ກອງເລຂາໄຊເຕັດຮັບຊາບ ກ່ອນເດືອນ ສິງຫາ 2026 ຫຼື ລ່ວງໜ້າ 90 ວັນ ກ່ອນກອງປະຊຸມຄະນະປະຈຳໄຊເຕັດ ຄັ້ງທີ 81 (SC81);

11) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ ເພື່ອຮັບປະກັນໃຫ້ ສປປ ລາວ ໄດ້ຮັບການປົດລັອກການໂຈະການຄ້າສັດປ່າຢ່າງຂາດຕົວ ໃນກອງປະຊຸມຄະນະປະຈຳໄຊເຕັດ ຄັ້ງທີ 81 (SC81) ທີ່ຈະຈັດຂຶ້ນໃນທ້າຍປີ 2026.

**ຂ. ຄະນະປະຕິບັດຕົວຈິງ ປະກອບມີບັນດາທ່ານ ດັ່ງນີ້:**

1. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ — ເປັນຫົວໜ້າຄະນະ;
2. ທ່ານ ຫົວໜ້າກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ — ເປັນຮອງຫົວໜ້າຄະນະ;
3. ທ່ານ ຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ — ເປັນຮອງຫົວໜ້າຄະນະ;
4. ທ່ານ ຫົວໜ້າກົມຕິດຕາມກວດກາການດຳເນີນຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ — ເປັນຄະນະ;

5. ທ່ານ ຫົວໜ້າກົມຕິດຕາມກວດກາການປະຕິບັດກົດໝາຍ, ອົງການໄອຍະການປະຊາຊົນສູງສຸດ ເປັນຄະນະ;
6. ທ່ານ ຫົວໜ້າກົມຕຳຫຼວດສິ່ງແວດລ້ອມ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
7. ທ່ານ ຫົວໜ້າກົມຕຳຫຼວດສາກົນ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
8. ທ່ານ ຫົວໜ້າກົມເສດຖະກິດ, ກະຊວງປ້ອງກັນປະເທດ ເປັນຄະນະ;
9. ທ່ານ ຫົວໜ້າກົມກວດກາລັດ, ອົງການກວດກາແຫ່ງລັດ ເປັນຄະນະ;
10. ທ່ານ ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ;
11. ທ່ານ ຫົວໜ້າກົມກວດກາລັດ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ;
12. ທ່ານ ຫົວໜ້າກົມນິຕິກຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
13. ທ່ານ ຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
14. ທ່ານ ຫົວໜ້າກົມພາສີ, ກະຊວງການເງິນ ເປັນຄະນະ;
15. ທ່ານ ຫົວໜ້າກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
16. ທ່ານ ຫົວໜ້າກົມຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ເປັນຄະນະ;
17. ທ່ານ ຫົວໜ້າກົມກວດກາ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;
18. ທ່ານ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;
19. ທ່ານ ຫົວໜ້າໜ່ວຍງານວິທະຍາສາດໄຊເຕັດ, ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ.

- **ສິດ ແລະ ໜ້າທີ່ ຄະນະປະຕິບັດຕົວຈິງ ດັ່ງນີ້:**

1) ແຕ່ງຕັ້ງຄະນະວິຊາການຊ່ວຍວຽກຕົວຈິງ ແຕ່ລະຂະແໜງການຂອງຕົນ ເພື່ອຮ່ວມກັນລົງຈັດຕັ້ງປະຕິບັດການສະກັດກັ້ນ, ຕ້ານ ແລະ ປາບປາມ ອາຊະຍາກຳສັດປ່າຂ້າມຊາດ ໃຫ້ເຫັນຜົນຕົວຈິງ ໂດຍຖືເອົາພາລະບົດບາດຕາມສາຍຕັ້ງຂອງແຕ່ລະຂະແໜງການ ເປັນບ່ອນອີງໃນການເຄື່ອນໄຫວແບບລວມສູນ;
2) ລົງສົມທົບກັບອົງການປົກຄອງທ້ອງຖິ່ນຕາມສາຍຕັ້ງ ເພື່ອດຳເນີນການກວດກາ, ສະກັດກັ້ນ, ຕ້ານ ແລະ ປາບປາມ ເຄືອຂ່າຍອາຊະຍາກຳຂ້າມຊາດ ທີ່ລັກລອບຄ້າຂາຍສັດປ່າ ແລະ ຜະລິດຕະພັນສັດປ່າ ເປັນຕົ້ນແມ່ນ ງາຊ້າງ ແລະ ນໍແຮດ ຢູ່ 18 ຈຸດເປົ້າໝາຍ ໃນນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ ແລະ ຈຸດອື່ນໆ ທີ່ມີເບາະແສ ໂດຍນຳໃຊ້ມາດຕະການສືບສວນ-ສອບສວນຊອກຫາຜູ້ກະທຳຜິດ ຕາມຂະບວນການຍຸຕິທຳທາງກົດໝາຍ; ພ້ອມທັງສະເໜີຄະນະຊີ້ນຳລວມ ອອກຄຳສັ່ງປິດຮ້ານຄ້າທີ່ຂາຍສັດປ່າຜິດກົດໝາຍຢ່າງເດັດຂາດ ທີ່ພົວພັນກັບລະບົບຕ່ອງໂສ້ການບໍລິການທ່ອງທ່ຽວ;
3) ຮີບຮ້ອນດຳເນີນການສະຫຼຸບສຳນວນຄະດີອາຊະຍາກຳສັດປ່າ 05 ຄະດີທີ່ຍັງຄ້າງຄາ ໃຫ້ເປັນວຽກບຸລິມະສິດ ລວມທັງຄະດີເສືອໂຄ່ງ ຢູ່ ແຂວງຈຳປາສັກ ແລະ ຄະດີອື່ນໆ ໃຫ້ໄດ້ຮັບການຕັດສິນລົງໂທດທີ່ເດັດຂາດ ຕາມປະມວນກົດໝາຍອາຍາ ແລະ ລະບຽບການຂອງສົນທິສັນຍາສາກົນ ແລ້ວລາຍງານຜົນການດຳເນີນຄະດີການຄ້າຂາຍສັດປ່າໃຫ້ກອງເລຂາໄຊເຕັດຊາບຕາມກຳນົດເວລາ;
4) ຍົກເລີກການແກ້ໄຂດ້ວຍວິທີການທາງບໍລິຫານ ແລະ ໃຫ້ນຳເອົາບັນດາຂອງກາງທັງໝົດທີ່ກວດຍຶດໄດ້ ພ້ອມທັງຜູ້ກະທຳຜິດ ເຂົ້າສູ່ຂະບວນການຍຸຕິທຳທາງອາຍາຢ່າງເຂັ້ມງວດ ໂດຍການສ້າງສຳນວນຄະດີສົ່ງໃຫ້ອົງການໄອຍະການຟ້ອງສານ ເພື່ອລົງໂທດຕາມມາດຕາ 334 ຂອງປະມວນກົດໝາຍອາຍາ ໃຫ້ສົມສ່ວນກັບການກະທຳຜິດ;
5) ນຳເອົາຕົວຢ່າງຂອງກາງທີ່ຍຶດໄດ້ ມອບໃຫ້ໜ່ວຍງານວິທະຍາສາດໄຊເຕັດ (CITES SA) ດຳເນີນການກວດພິສູດທາງນິຕິວິທະຍາສາດ (DNA Test) ເພື່ອຢັ້ງຢືນຊະນິດພັນ; ໃນກໍລະນີຜົນພິສູດຢັ້ງຢືນວ່າເປັນຂອງແທ້ ໃຫ້ສືບຕໍ່ຂະຫຍາຍຜົນການສືບສວນ-ສອບສວນຫາແຫຼ່ງທີ່ມາ ແລະ ເສັ້ນທາງການນຳເຂົ້າທີ່ຜິດກົດໝາຍ; ໃນກໍລະນີເປັນຂອງປອມ ຫຼື ຂອງຮຽນແບບ ໃຫ້ດຳເນີນການຍຶດ ແລະ ທຳລາຍຖິ້ມ ໂດຍປະຕິບັດຕາມຄຳສັ່ງ ສະບັບເລກທີ 25/ນຍ ຢ່າງເຂັ້ມງວດ;

6) ຄົ້ນຄວ້າ ແລະ ສ້າງກົນໄກການຄຸ້ມຄອງຂອງກາງທີ່ຍຶດໄດ້ໃຫ້ປອດໄພ ຕາມມະຕິ Conf. 10.10 ແລະ Conf. 9.14 ຂອງໄຊເຕັດ ເພື່ອການສຶກສາ ຫຼື ທຳລາຍຖິ້ມ; ຫ້າມນຳມາປະມູນຂາຍ ຫຼື ສົ່ງຄືນໃຫ້ຜູ້ຄ້າຂາຍເດັດຂາດ ເພື່ອປ້ອງກັນການຮົ່ວໄຫຼຄືນສູ່ຕະຫຼາດມືດ;

7) ຄົ້ນຄວ້າ ແລະ ກຳນົດກົນໄກວິທີການຫັນປ່ຽນຟາມເສືອໃຫ້ກາຍເປັນສວນສັດ ຫຼື ປິດຟາມເສືອ ທີ່ບໍ່ສອດຄ່ອງຕາມກົດໝາຍ ເພື່ອນຳສະເໜີລັດຖະບານພິຈາລະນາອະນຸມັດ, ພ້ອມທັງຄົ້ນຄວ້າອອກແຈ້ງການໃຫ້ຢຸດຕິການຂະຫຍາຍພັນ ແລະ ການຄ້າຂາຍຜະລິດຕະພັນເສືອຢ່າງເດັດຂາດ;

8) ປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານອາຊະຍາກຳສັດປ່າຂ້າມຊາດ ຮ່ວມກັບ ຕຳຫຼວດສາກົນ (INTERPOL), ອົງການພາສີໂລກ (WCO) ແລະ ເຄືອຂ່າຍ ASEAN-WEN ເພື່ອສະກັດກັ້ນການໃຊ້ ສປປ ລາວ ເປັນທາງຜ່ານ ແລະ ປາຍທາງ ໃນການລັກລອບຄ້າຂາຍສັດປ່າທີ່ຜິດກົດໝາຍ;

9) ຈັດກອງປະຊຸມປຶກສາຫາລືຂອງຄະນະວິຊາການຮ່ວມກັນຢ່າງເປັນປົກກະຕິໃນທຸກໆ 1 ເດືອນ ແລະ ສະຫຼຸບຕີລາຄາຜົນການປະຕິບັດງານຮ່ວມກັນໃນທຸກໆ 3 ເດືອນ ເພື່ອປະເມີນຄວາມຄືບໜ້າ ແລະ ແກ້ໄຂຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດ ໃຫ້ທັນກັບກຳນົດເວລາໃນການລາຍງານຜົນຕໍ່ໄຊເຕັດສາກົນ;

10) ສ້າງແຜນການເຄື່ອນໄຫວລະອຽດ, ແຜນວຽກ ແລະ ແຜນງົບປະມານແຕ່ລະໜ້າວຽກທີ່ເປັນບຸລິມະສິດໃຫ້ຊັດເຈນ ເພື່ອຮັບໃຊ້ການຈັດຕັ້ງປະຕິບັດຕົວຈິງ ພ້ອມທັງສ້າງກົນໄກການປະສານງານຜ່ານກຸ່ມເຄືອຂ່າຍສະເພາະ ຫຼື ກຸ່ມຄະນະວິຊາການ ເພື່ອແລກປ່ຽນຂໍ້ມູນຂ່າວສານແບບລັບ ແລະ ວ່ອງໄວ ໃນການຕິດຕາມເປົ້າໝາຍອາຊະຍາກຳ;

11) ເປັນໃຈກາງໃນການປະສານງານໂດຍກົງກັບກອງເລຂາໄຊເຕັດສາກົນ ເພື່ອລາຍງານຄວາມຄືບໜ້າຜົນສຳເລັດແຕ່ລະໜ້າວຽກ ແລະ ນຳເອົາຫຼັກຖານຢັ້ງຢືນການປະຕິບັດວຽກງານດັ່ງກ່າວ ບົນພື້ນຖານການເຫັນດີຂອງຄະນະຊີ້ນຳລວມ;

12) ປະສານງານ ແລະ ເຊື້ອເຊີນ ເລຂາທິການໃຫຍ່, ຫົວໜ້າຄະນະກຳມະການສັດປ່າ ແລະ ກອງເລຂາໄຊເຕັດສາກົນ ມາຢ້ຽມຢາມ ແລະ ເຮັດວຽກຕົວຈິງຢູ່ ສປປ ລາວ ເພື່ອກວດກາພິສູດຂໍ້ເທັດຈິງ ແລະ ຢັ້ງຢືນຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານພາກສະໜາມ ແນໃສ່ສ້າງຄວາມເຊື່ອໝັ້ນ ແລະ ແກ້ໄຂຂໍ້ຂ້ອງໃຈຕ່າງໆໃຫ້ກະຈ່າງແຈ້ງ ເພື່ອເປັນພື້ນຖານອັນໜັກແໜ້ນໃນການສະເໜີປົດລ້ອກການໂຈະການຄ້າສັດປ່າ ພາຍໃນທ້າຍປີ 2026.

13) ຈັດຕັ້ງປະຕິບັດໃຫ້ສຳເລັດທຸກໜ້າວຽກທີ່ກ່າວມາຂ້າງເທິງນັ້ນ ແລະ ທຸກຄຳແນະນຳທີ່ກຳນົດໄວ້ໃນແຜນດຳເນີນງານ (CAP) ຢ່າງເປັນຮູບປະທຳ ແລ້ວລາຍງານໃຫ້ກອງເລຂາໄຊເຕັດຮັບຊາບ ກ່ອນເດືອນສິງຫາ 2026 ຫຼື ລ່ວງໜ້າ 90 ວັນ ກ່ອນກອງປະຊຸມຄະນະປະຈຳໄຊເຕັດ ຄັ້ງທີ 81 (SC81);

14) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະຊີ້ນຳລວມ.

**ມາດຕາ 2** ງົບປະມານນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ທຸກໜ້າວຽກທີ່ກຳນົດໄວ້ໃນມາດຕາ 1 ແລະ ກຳນົດໄວ້ໃນແຜນດຳເນີນງານ (Compliance Action Plan - CAP) ແມ່ນໃຫ້ນຳໃຊ້ງົບປະມານ ຂອງໂຄງການພູມິທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ (ໂຄງການ LLL) ແລະ ສະເໜີການສະໜັບສະໜູນເພີ່ມເຕີມຈາກບັນດາອົງການຈັດຕັ້ງສາກົນ ທີ່ເປັນຄູ່ຮ່ວມງານ ບົນພື້ນຖານການວາງແຜນງົບປະມານບຸລິມະສິດໃຫ້ຊັດເຈນ ເພື່ອຮັບໃຊ້ການຈັດຕັ້ງປະຕິບັດຕົວຈິງໃຫ້ມີປະສິດທິຜົນ.

**ມາດຕາ 3** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ພາກສ່ວນກ່ຽວຂ້ອງ ແລະ ບັນດາທ່ານ ທີ່ໄດ້ຮັບການແຕ່ງຕັ້ງຂ້າງເທິງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ສະບັບນີ້.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ